## ກຽມພ້ອມໃນການລົງຄະແນນສຽງເລືອກຕັ້ງໃນຄາລິຟໍເນຍ:
## ຄູ່ມືສໍາລັບການລົງຄະແນນສຽງເລືອກຕັ້ງປະທານາທິບໍດີ ປີ 2020 ໃນຄາລິຟໍເນຍ

ຜູ້ມີສິດເລືອກຕັ້ງໃນລັດຄາລິຟໍເນຍມີທາງເລືອກໃນການລົງຄະແນນສຽງເລືອກຕັ້ງໃນລະດູໃບໄມ້ຫລົ່ນນີ້. ເນື່ອງຈາກການແຜ່ຂອງໂຣກລະບາດຢ່າງຕໍ່ເນື່ອງ, ຜູ້ມີສິດເລືອກຕັ້ງທີ່ໄດ້ຈົດທະບຽນທຸກຄົນຈະໄດ້ຮັບບັດລົງຄະແນນສຽງທາງໄປສະນີແຕ່ສາມາດ ເລືອກໃນການລົງຄະແນນສຽງດ້ວຍຕົນເອງຫຼືທາງໄປສະນີ. ນໍາໃຊ້ຄູ່ມືສະບັບນີ້ເພື່ອກຽມພ້ອມໃນການລົງຄະແນນສຽງ.

**ຈົດທະບຽນຫຼືກວດເບິ່ງສະຖານະພາບຂອງການຈົດທະບຽນຂອງທ່ານໄດ້ທີ່: registertovote.ca.gov**
ທ່ານຕ້ອງຈົດທະບຽນເພື່ອລົງຄະແນນເລືອກຕັ້ງ.  ທ່ານສາມາດຈົດທະບຽນລົງຄະແນນສຽງເປັນພາສາ ສະເປນ, ພາ ສາຈີນ, ພາສາຮິນດີ, ພາສາຍີ່ປຸ່ນ, ພາສາຂະເໝນ, ພາສາເກົາຫຼີ, ພາສາຕາກາລອັກ, ພາສາໄທແລະພາສາວຽດນາມ. ຖ້າທ່ານໄດ້ຈົດທະບຽນແລ້ວໃຫ້ກວດເບິ່ງເພື່ອໃຫ້ແນ່ໃຈວ່າສະຖານະພາບໃນການຈົດທະບຽນຂອງທ່ານໄດເຂົ້າຢູ່ໃນລະບົບ, ທີ່ຢູ່ຂອງທ່ານແລະວິທີການລົງຄະແນນທີ່ທ່ານມັກນັ້ນຖືກຕ້ອງທຸກຢ່າງ. ທ່ານສາມາດຮ້ອງຂໍເອົາບັດລົງຄະແນນສຽງແລະເອກະສານເລືອກຕັ້ງໃນພາສາທີ່ທ່ານ ຕ້ອງການໄດ້. ຢ່າລືມຈົດທະບຽນພາຍໃນວັນທີ່ 19 ຕຸລາ. ຖ້າຈະຈົດທະບຽນ ຫຼັງຈາກວັນທີ່ 19 ຕຸລາ,ໃຫ້ຕິດຕໍ່ຫ້ອງການເລືອກຕັ້ງຂອງຄາວຕີຂອງທ່ານເພື່ອຊອກຫາທາງເລືອກໃນການຈົດທະບຽນລົງຄະແນນສຽງດ້ວຍຕົນເອງຫຼືທາງໄປສະນີ.

**ລົງຊື່ເພື່ອຕິດຕາມບັດລົງຄະແນນສຽງຂອງທ່ານທີ່: WheresMyBallot.sos.ca.gov**
ທ່ານຈະໄດ້ຮັບແຈ້ງການວ່າຍາມໃດບັດຂອງທ່ານຖືກສົ່ງໃຫ້ທ່ານ, ແລະຍາມໃດຫ້ອງການເລືອກຕັ້ງຂອງຄາວຕີຂອງທ່ານໄດ້ຮັບແລະນັບບັດຂອງທ່ານ. ລົງຊື່ເພື່ອຮັບການແຈ້ງເຕືອນຜ່ານທາງອີເມວ, ຂໍ້ຄວາມຫຼືທາງໂທລະສັບ.

**ລົງຄະແນນສຽງລ່ວງໜ້າ. ຊອກຫາບ່ອນທີ່ຈະໄປລົງຄະແນນໄດ້ທີ່: caearlyvoting.sos.ca.gov**
ລົງຄະແນນສຽງກ່ອນໜ້າມື້ເລືອກຕັ້ງ. ບັດລົງຄະແນນຈະຖືກສົ່ງອອກໃຫ້ຜູ້ມີສິດລົງຄະແນນເລືອກຕັ້ງ ທຸກຄົນ ພາຍໃນ ອາທິດຂອງວັນທີ່ 5 ຕຸລາ (ເດືອນ 10) ແລະທ່ານສາມາດເລືອກໃນການລົງຄະແນນສຽງຈາກເຮືອນຫຼືໄປລົງຄະແນນດ້ວຍຕົນເອງຢູ່ສະຖານທີ່ປ່ອນບັດເລືອກຕັ້ງ.

**<u>ຕື່ມຂໍ້ມູນລົງໃນບັດລົງຄະແນນຂອງທ່ານຢູ່ເຮືອນ</u>**



ປິດຊອງ,ເຊັນຊື່ແລະຂຽນວັນທີ່ໃສ່ຫຼັງຊອງບັດລົງຄະແນນສຽງຂອງທ່ານ. ບໍ່ຈໍາເປັນຕ້ອງຕິດສະແຕມ. ສົ່ງຄືນໃຫ້ໄວເທົ່າທີ່ຈະໄວໄດ້. ທ່ານສາມາດສົ່ງບັດລົງຄະແນນຂອງທ່ານດ້ວຍວິທີການດັ່ງຕໍ່ລົງໄປນີ້:

- **ສົ່ງທາງບໍຣິການໄປສະນີສະຫະຣັດອາເມຣິກາ.** ປ່ອນລົງຕູ້ຈົດໝາຍຫຼືຢູ່ທີ່ຫ້ອງການໄປສະນີໄດ້ທຸກບ່ອນ. ບັດລົງຄະແນນສຽງຕ້ອງໄດ້ຮັບການປະທັບກາໄປສະນີພາຍໃນວັນທີ່ 3 ພະຈິກ, ມື້ເລືອກຕັ້ງ, ແລະໄດ້ຮັບທີ່ຫ້ອງການເລືອກຕັ້ງຂອງຄາວຕີຂອງທ່ານພາຍໃນວັນທີ່ 20 ພະຈິກ (ເດືອນ11).
- **ຕູ້ປ່ອນບັດ.** ມີຫຼາຍຄາວຕີໄດ້ຕັ້ງຕູ້ປ່ອນບັດທີ່ປອດໄພ,ອໍານວຍຄວາມສະດວກຢູ່ທົ່ວເຂດຄາວຕີ. ຊອກຫາທີ່ຕັ້ງ.
- **ສະຖານທີ່ລົງຄະແນນສຽງດ້ວຍຕົນເອງ.** ໄປປ່ອນບັດຢູ່ສະຖານທີ່ປ່ອນບັດໃນຄາວຕີຂອງທ່ານບ່ອນໃດກໍໄດ້. ການກໍານົດວັນແລະເວລາຈະແຕກຕ່າງກັນໄປແຕ່ລະຄາວຕີ. ຊອກຫາທີ່ຕັ້ງ.
- **ບຸກຄົນທີ່ໄວ້ໃຈໄດ້.** ໃຫ້ໝູ່ຄູ່ຫຼືຄົນໃນຄອບຄົວນໍາບັດຂອງທ່ານໄປປ່ອນບັດໃຫ້ທ່ານ. ປະຕິບັດຕາມຄໍາແນະນໍາຢູ່ຫຼັງຊອງຈົດໝາຍເພື່ອມອບໝາຍໃຫ້ບຸກຄົນນັ້ນ.

**<u>ລົງຄະແນນສຽງດ້ວຍຕົນເອງ</u>**




ມີຫຼາຍຄາວຕີ້ຈະໃຫ້ໂອກາດໃນການລົງຄະແນນສຽງລ່ວງໜ້າກ່ອນ. ສະຖານທີ່ລົງຄະແນນສຽງອາດຈະຖືກປັບປຸງໃໝ່ພາຍໃນອາທິດທີ່ຈະມານີ້. ຊອກຮູ້ບ່ອນທີ່ຈະໄປໂດຍການເຂົ້າເບິ່ງແວບໄຊທ ຂອງຫ້ອງການເລືອກຕັ້ງໃນຄາວຕີ້ຂອງທ່ານ. ໄປເບິ່ງສະຖານທີ່ປ່ອນບັດເພື່ອ:

- ປ່ອນບັດລົງຄະແນນສຽງໃສ່ເຄື່ອງປ່ອນບັດທີ່ສາມາດເຂົ້າເຖິງໄດ້
- ຂໍເອົາການຊ່ວຍເຫຼືອໃນພາສາທີ່ມີໄວ້ສຳລັບຄາວຕີ້ຂອງທ່ານ
- ຈົດທະບຽນແລະລົງຄະແນນໃນມື້ດຽວກັນ
- ຂໍເອົາໃບປ່ອນບັດສະບັບໃໝ່ແທນບັດເກົ່າ

**ຫຼືລົງຄະແນນສຽງໃນວັນເລືອກຕັ້ງ, ວັນອັງຄານ, ວັນທີ່ 3 ພະຈິກ (ເດືອນ11).** sos.ca.gov/elections/polling-place ລົງຄະແນນສຽງດ້ວຍຕົນເອງໃນວັນເລືອກຕັ້ງ. ຊອກຫາບ່ອນທີ່ຈະລົງຄະແນນສຽງ. ສະຖານທີ່ປ່ອນບັດຈະເປີດເວລາ 7:00 ໂມງເຊົ້າຮອດ 8:00 ໂມງແລງ. ທ່ານສາມາດລົງຄະແນນສຽງໄດ້ຖ້າທ່ານເຂົ້າແຖວລຽນຄິວກ່ອນ 8:00 ໂມງແລງ. ໃສ່ໜ້າກາກປົກໜ້າແລະຮັກສາໄລຍະຫ່າງຈາກຄົນອື່ນ. ເຈົ້າໜ້າທີ່ເລືອກຕັ້ງຈະສາມາດຊ່ວຍທ່ານໄດ້.

**ຂໍ້ມູນເພີ່ມເຕີມ:**

**ການລົງຄະແນນສຽງດ້ວຍການໃຊ້ເທັກໂນໂລຢີທີ່ເອີ້ນວ່າ Remote Access Vote by Mail**

ການລົງຄະແນນດ້ວຍການໃຊ້ເທັກໂນໂລຢີຊ່ວຍໃຫ້ຜູ້ມີສິດເລືອກຕັ້ງທີ່ມີຄວາມພິການສາມາດໃຊ້ເທັກໂນໂລຢີການຊ່ວຍເຫຼືອຂອງພວກເຂົາຢູ່ເຮືອນເພື່ອອ່ານແລະໝາຍບັດຂອງພວກເຂົາ. ສຳລັບການເລືອກຕັ້ງປະທານາທິບໍດີໃນປີ 2020 ນີ້, ມີຫຼາຍຄາວຕີ້ກຳລັງດຳເນີນການເພື່ອໃຫ້ມີການລົງຄະແນນສຽງແບບ Remote Access Vote by Mail ສຳລັບຜູ້ມີສິດລົງຄະແນນສຽງທົ່ວໄປທີ່ອາດຕ້ອງການໃຊ້ວິທີດັ່ງກ່າວເນື່ອງຈາກການເຈັບເປັນທີ່ບໍ່ຄາດຄິດຫຼືຈາກສະພາບການອື່ນໆ. ຕິດຕໍ່ຫ້ອງການເລືອກຕັ້ງຂອງຄາວຕີ້ຂອງທ່ານເພື່ອຮຽນຮູ້ເພີ່ມເຕີມທີ່: sos.ca.gov/county-elections-offices.

**ຂໍຄວາມຊ່ວຍເຫຼືອ:**

- ຕິດຕໍ່ຫ້ອງການເລືອກຕັ້ງຂອງຄາວຕີ້ຂອງທ່ານເພື່ອຮັບຄຳຕອບຂອງຂໍ້ຂ້ອງໃຈກ່ຽວກັບການເລືອກຕັ້ງທັງໝົດໄດ້ທີ່: sos.ca.gov/county-elections-offices.
- ຮູ້ສິດທິຂອງທ່ານໃນຖານະເປັນຜູ້ລົງຄະແນນສຽງໃນລັດຄາລິຟໍເນຍແລະເຂົ້າເບິ່ງໄດ້ທີ່: sos.ca.gov/elections/voter-bill-rights
- ຄາວຕີ້ຫຼາຍແຫ່ງໃຫ້ການຊ່ວຍເຫຼືອເປັນພາສາອື່ນໆນອກເໜືອຈາກພາສາອັງກິດ. ຕິດຕໍ່ ຫ້ອງການເລືອກຕັ້ງ ເພື່ອຂໍຄວາມຊ່ວຍເຫຼືອເປັນພາສາຂອງທ່ານ.
- ເລຂາທິການຂອງລັດຄາລິຟໍເນຍຍັງໄດ້ໃຊ້ລະບົບສາຍດ່ວນໃນການໃຫ້ຂໍ້ມູນເປັນພາສາອັງກິດ, ພາສາສະເປນ, ພາສາຈີນ, ພາສາຮິນດີ, ພາສາຍີ່ປຸ່ນ, ພາສາຂະເໝນ, ພາສາເກົາຫຼີ, ພາສາຕາກາລອັກ, ພາສາໄທ, ພາສາວຽດນາມ. ສຳລັບຂໍ້ມູນເພີ່ມເຕີມເຂົ້າເບິ່ງໄດ້ທີ່: sos.ca.gov/elections/voting-resources/voting-california/voter-hotlines

*(800) 345-VOTE (8683) – English ພາສາອັງກິດ
*(800) 339-2857 - 中文 / Chinese ພາສາຈີນ
*(800) 339-2865 - 日本語 / Japanese ພາສາຍີ່ປຸ່ນ
*(866) 575-1558 - 한국어 / Korean ພາສາເກົາຫຼີ
*(855) 345-3933 - ภาษาไทย / Thai ພາສາໄທ
*(800) 232-VOTA (8682) - español / Spanish ພາສາສະເປນ
*(888) 345-2692 - हिन्दी / Hindi ພາສາຮິນດີ
*(888) 345-4917 - ខ្មែរ / Khmer ພາສາຂະເໝນ
*(800) 339-2957 – Tagalog ພາສາຕາກາລອັກ
(800) 339-8163 - Việt ngữ / Vietnamese ພາສາວຽດນາມ

*(800) 833-8683 – TTY/TDD ພາສາກື້ກ/ພາສາສໍາລັບຄົນຫູໜວກ